ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ
Lao Chamber of Professional Accountants and Auditors

# ບົດລາຍງານ

ການເຄື່ອນໄຫວວຽກງານ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ
ມັງກອນ (1) - ທັນວາ (12) 2020

COPY

# ສາລະບານ

I. ສະຖານະພາບລວມ: ........ 1

1.1 ສະຖານະດ້ານກົດໝາຍ: ........ 1

1.2 ດ້ານການຄົ້ນຄ້ວານິຕິກຳພາຍໃນ: ........ 2

1.3 ດ້ານການຈັດຕັ້ງ: ........ 2

III. ດ້ານການເຄື່ອນໄຫວ: ........ 6

3.1 ການປະສານງານ ແລະ ການຮ່ວມມື ........ 6

3.2 ການຈັດຝຶກອົບຮົມ: ........ 7

3.2.1 ການຈັດຝຶກອົບຮົມ ຫຼັກສູດວິຊາຊີບຊ່ຽວຊານບັນຊີ (CPA): ........ 7

IV. ດ້ານການເງິນ ........ 18

4.1 ລາຍຮັບ: ........ 18

4.2 ຊົງເຂດລາຍຈ່າຍ: ........ 18

V. ແຜນການເຄື່ອນໄຫວປະຈຳປີ 2021 ........ 18

# I. ສະຖານະພາບລວມ:

## 1.1 ສະຖານະດ້ານກົດໝາຍ:

1.1.1 ປະຫວັດຄວາມເປັນມາຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ:

ອົງການຈັດຕັ້ງວິຊາຊີບການບັນຊີ ຊຶ່ງຢູ່ພາຍໃຕ້ການຊີ້ນຳ ຂອງກະຊວງການເງິນ ຖືກສ້າງຕັ້ງຂຶ້ນ ໃນປີ 1998 ຕາມຂໍ້ຕົກລົງລັດຖະມົນຕີກະຊວງການເງິນເລກທີ 0722/ກງ ເພື່ອປະຕິບັດຕາມດຳລັດຂອງນາຍຍົກລັດຖະມົນຕີເລກທີ 161/ນຍ ໃນປີ 1996. ຈາກນັ້ນໄດ້ປ່ຽນຊື່ ເປັນສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ເລກທີ 1004/ກງ ລົງວັນທີ 7 ເມສາ 2015 ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການກວດສອບອິດສະຫຼະປີ 2014.

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ເປັນສະມາຊິກຂອງສະຫະພັນນັກບັນຊີອາຊຽນ (AFA), ຊຶ່ງປັດຈຸບັນປະເທດມຽນມາເປັນປະທານ. ສອ-ບກລ ໄດ້ເຂົ້າເປັນສະມາຊິກສົມທົບຂອງ ສະຫະພັນນັກບັນຊີສາກົນ (IFAC) ຊຶ່ງໄດ້ຖືກຮັບຮອງເປັນທາງການໃນວັນທີ 13 ພະຈິກ 2019 ຊຶ່ງມີຂໍ້ຜູກມັດປະຕິບັດແຜນການດຳເນີນງານ ທີ່ສອດຄ່ອງກັບ 7 ພັນທະຕົ້ນຕໍທີ່ຖືກກຳນົດໂດຍສະຫະພັນນັກບັນຊີສາກົນ.

**1.1.2 ພາລະບົດບາດຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ:**

ພາລະບົດບາດຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍການກວດສອບອິດສະຫຼະແມ່ນການປະກອບຄຳເຫັນໃຫ້ແກ່ລັດ, ປຸກລະດົມຂົນຂວາຍ, ນຳພາ, ເຕົ້າໂຮມສະມາຊິກລວມທັງປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງນັກບັນຊີ ແລະ ນັກກວດສອບ ໃຫ້ເຄື່ອນໄຫວວິຊາຊີບຖືກຕ້ອງຕາມລະບຽບກົດໝາຍ, ຊ່ວຍອົງການຂອງລັດໃນການສົ່ງເສີມ, ພັດທະນາ ແລະ ຍົກລະດັບວິຊາຊີບການບັນຊີ ແລະ ການກວດສອບ.

**1.1.3 ໜ້າທີ່ຫຼັກຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ:**

ໜ້າທີ່ຫຼັກຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແມ່ນການຈັດຝຶກອົບຮົມ, ຍົກລະດັບຄວາມຮູ້ດ້ານວິຊາຊີບການບັນຊີ ແລະ ການກວດສອບ; ຮ່ວມມືກັບອົງການຈັດຕັ້ງ ແລະ ສະຖາບັນວິຊາຊີບການບັນຊີຂອງບັນດາປະເທດພາກພື້ນ ແລະ ສາກົນ; ແລະ ຕິດຕາມກວດກາການເຄື່ອນໄຫວຂອງສະມາຊິກຕົນ.

ນອກນັ້ນ, ຍັງຕ້ອງສືບຕໍ່ປັບປຸງຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ ແລະ ການຝຶກອົບຮົມແບບຕໍ່ເນື່ອງ (CPD) ໃຫ້ສອດຄ່ອງກັບສັນຍາຮັບຮູ້ເຊິ່ງກັນແລະກັນດ້ານການບໍລິການບັນຊີອາຊຽນທີ່ລັດຖະບານລາວໄດ້ເຊັນຮ່ວມກັບບັນດາປະເທດສະມາຊິກອາຊຽນໃນປີ 2015 (ພາຍຫຼັງທີ່ໄດ້ເຊັນສັນຍາຂໍ້ຕົກລົງໃນປີ 2014).

ເພື່ອສາມາດດຳເນີນໜ້າທີ່ໃນການຈັດຝຶກອົບຮົມ ລັດຖະມົນຕີກະຊວງການເງິນໄດ້ອອກຂໍ້ຕົກລົງ ເລກທີ 3777/ກງ ລົງວັນທີ 2 ພະຈິກ 2015 ວ່າດ້ວຍການອະນຸມັດໃຫ້ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ດຳເນີນການຝຶກອົບຮົມດ້ານວິຊາຊີບ.